ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ

ເລກທີ: 661 /ຍທຂ

ນະຄອນຫຼວງວຽງຈັນ, ວັນທີ: 11 ມັງກອນ 2023

# ຂໍ້ຕົກລົງ
# ວ່າດ້ວຍການຂຶ້ນທະບຽນ ລົດໄຟ, ຫົວຈັກ, ຕູ້ ແລະ ຫາງລາກ ລົດໄຟ

- ອີງຕາມ ກົດໝາຍ ວ່າດ້ວຍການລົດໄຟ ສະບັບເລກທີ 62/ສພຊ, ລົງວັນທີ 17 ທັນວາ 2018;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 677/ນຍ, ລົງວັນທີ 21 ທັນວາ 2021;
- ອີງຕາມ ໜັງສືສະເໜີ ຂອງກົມທາງລົດໄຟ ສະບັບເລກທີ 28896/ກທຟ, ລົງວັນທີ 22 ພະຈິກ 2022.

## ລັດຖະມົນຕີ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດ ຫຼັກການ, ລະບຽບການ, ວິທີການ ແລະ ມາດຕະການ ກ່ຽວກັບການຂຶ້ນທະບຽນ ລົດໄຟ, ຫົວຈັກ, ຕູ້ ແລະ ຫາງລາກ ລົດໄຟ ໃນ ສປປ ລາວ ເພື່ອ ຄຸ້ມຄອງ, ຕິດຕາມ ກວດກາ ການນຳເຂົ້າ ແລະ ການນຳໃຊ້, ແນ່ໃສ່ຮັບປະກັນ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍ, ສະດວກ, ວ່ອງໄວ, ປອດໄພ, ມີປະສິດທິພາບ ແລະ ປະສິດທິຜົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

### ມາດຕາ 2 ການຂຶ້ນທະບຽນ ລົດໄຟ, ຫົວຈັກ, ຕູ້ ແລະ ຫາງລາກ ລົດໄຟ

ການຂຶ້ນທະບຽນ ລົດໄຟ, ລົດໄຟ, ຫົວຈັກ, ຕູ້ ແລະ ຫາງລາກ ລົດໄຟ ແມ່ນ ຂະບວນການບັນທຶກຂໍ້ມູນຂອງ ລົດໄຟ, ຫົວຈັກ, ຕູ້ ແລະ ຫາງລາກ ລົດໄຟ ເຂົ້າໃນລະບົບຖານຂໍ້ມູນ ເພື່ອຢັ້ງຢືນການເປັນກຳມະສິດຂອງ ນິຕິບຸກຄົນ ແລະ ການຈັດຕັ້ງ ໃນການ ຕິດຕາມ ກວດກາ.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ລົດໄຟ** ໝາຍເຖິງ ຍານພາຫະນະທີ່ເປັນຕູ້ເກາະກັນເປັນຂະບວນ ຊຶ່ງຂັບເຄື່ອນດ້ວຍຫົວຈັກ, ແລ່ນໄປຕາມລາງ ເພື່ອຂົນສົ່ງຜູ້ໂດຍສານ ແລະ ສິນຄ້າ ຈາກຕົ້ນທາງໄປຫາປາຍທາງເປົ້າໝາຍ;

2. **ຫົວຈັກລົດໄຟ** ໝາຍເຖິງ ຫົວຈັກທີ່ໃຊ້ສຳລັບລາກແກ່ລະບົບລໍ້ເລື່ອນ ຊຶ່ງມີການລະບຸຜູ້ຜະລິດ, ຄວາມແຮງ, ຍີ່ຫໍ່ ແລະ ລຸ່ນ ທີ່ຂັບເຄື່ອນດ້ວຍພະລັງງານໄຟຟ້າ Electric Multiple Unit (EMU), ນ້ຳມັນກະຊວນ Diesel Multiple Unit (DMU) ແລະ ອາຍນ້ຳ (Steam);

3. ຕູ້ລົດໄຟ ໝາຍເຖິງ ຕູ້ຂົນສົ່ງຜູ້ໂດຍສານ ແລະ ຕູ້ຂົນສົ່ງສິນຄ້າ ທາງລົດໄຟ ທີ່ນຳໃຊ້ ຕາມແຕ່ລະປະເພດ ແລະ ຈຸດປະສົງຂອງການຂົນສົ່ງ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ພົວພັນ ແລະ ເຄື່ອນໄຫວ ກ່ຽວກັບວຽກງານການຂຶ້ນທະບຽນ ລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ ຢູ່ ສປປ ລາວ.

## ໝວດທີ 2
## ການຂຶ້ນທະບຽນ ລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ

**ມາດຕາ 5 ສັນຊາດ ແລະ ທະບຽນ ລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ**

ລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ ທີ່ນຳໃຊ້ ຢູ່ ສປປ ລາວ ຕ້ອງ ຂຶ້ນທະບຽນ, ຕິດເຄື່ອງໝາຍສັນຊາດ, ເຄື່ອງໝາຍ ແລະ ເລກທະບຽນ ໃຫ້ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ.

**ມາດຕາ 6 ເງື່ອນໄຂການຂຶ້ນທະບຽນລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ**

ການຂຶ້ນທະບຽນລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ ຕ້ອງປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ຜູ້ຈະເອົາລົດໄຟມາຂຶ້ນທະບຽນ ຕ້ອງເປັນເຈົ້າຂອງ ຫຼື ຜູ້ໄດ້ຮັບສິດນຳໃຊ້ລົດໄຟ ຊຶ່ງແມ່ນ:
   - ພົນລະເມືອງລາວ;
   - ຄົນຕ່າງດ້າວ, ຄົນຕ່າງປະເທດ ທີ່ຕັ້ງສຳນັກງານການດຳເນີນທຸລະກິດ ຫຼື ມີທີ່ຢູ່ຖາວອນໃນ ສປປ ລາວ;
   - ວິສາຫະກິດ,ບໍລິສັດ ຫຼື ສະມາຄົມ ທີ່ໄດ້ຮັບອະນຸຍາດສ້າງຕັ້ງຢ່າງຖືກຕ້ອງຕາມກົດໝາຍຂອງ ສປປ ລາວ.

2. ລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ ທີ່ໄດ້ມາດຕະຖານເຕັກນິກ ແລະ ມີອາຍຸ ນຳໃຊ້ຕາມມາດຕະຖານຂອງຜູ້ຜະລິດ;

3. ລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ ທີ່ຂຶ້ນທະບຽນຢູ່ ສປປ ລາວແລ້ວ ຈະບໍ່ອະນຸຍາດໃຫ້ຂຶ້ນທະບຽນ ຢູ່ປະເທດອື່ນ ແລະ ລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ ທີ່ໄດ້ຂຶ້ນທະບຽນຢູ່ປະເທດອື່ນແລ້ວ ບໍ່ອະນຸຍາດໃຫ້ຂຶ້ນທະບຽນຢູ່ ສປປ ລາວ ອີກ.

**ມາດຕາ 7 ເອກະສານປະກອບການຂໍຂຶ້ນທະບຽນລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ**

ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງຂຶ້ນທະບຽນລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ ຕ້ອງປະກອບເອກະສານ ດັ່ງນີ້:

1. ໃບຄຳຮ້ອງຂໍຂຶ້ນທະບຽນ;
2. ສຳເນົາຖ່າຍ ປຶ້ມສຳມະໂນຄົວ ຫຼື ບັດປະຈຳຕົວ, ໜັງສືຜ່ານແດນ;
3. ຂໍ້ຕົກລົງສ້າງຕັ້ງ ຫຼື ທະບຽນວິສາຫະກິດ;
4. ໃບຢັ້ງຢືນ ຊື້-ຂາຍ;
5. ໃບອະນຸຍາດນຳເຂົ້າຈາກ ກະຊວງອຸດສາຫະກຳ ແລະ ການຄ້າ;
6. ໃບອະນຸຍາດນຳເຂົ້າທາງດ້ານເຕັກນິກຈາກ ກະຊວງໂຍທາທິການ ແລະ ຂົນສົ່ງ;
7. ໃບແຈ້ງພາສີ, ໃບຢັ້ງຢືນການເສຍພາສີ, ເວັ້ນເສຍແຕ່ມີການຍົກເວັ້ນພາສີ, ອາກອນ ຕາມການຕົກລົງຂອງລັດຖະບານ;
8. ໃບຢັ້ງຢືນມາດຕະຖານຄວາມປອດໄພ ແລະ ສິ່ງແວດລ້ອມ.

## ໝວດທີ 3
## ການນຳເຂົ້າລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ

**ມາດຕາ 8 ການນຳເຂົ້າລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ**

ການນຳເຂົ້າລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ ມີ ສອງຮູບແບບ ດັ່ງນີ້:

1. ການນຳເຂົ້າແບບຖາວອນ;
2. ການນຳເຂົ້າແບບຊົ່ວຄາວ.

ການນຳເຂົ້າລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ ຕ້ອງໄດ້ຮັບອະນຸຍາດທາງດ້ານເຕັກນິກ ຈາກ ກົມທາງລົດໄຟ ກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ຂໍອະນຸຍາດນຳເຂົ້າຈາກ ກົມນຳເຂົ້າ ແລະ ສົ່ງອອກ ກະຊວງອຸດສາຫະກຳ ແລະ ການຄ້າ, ຍົກເວັ້ນການນຳເຂົ້າລົດໄຟແບບຊົ່ວຄາວ ທີ່ບໍ່ປ່ຽນປ້າຍທະບຽນ.

**ມາດຕາ 9 ການນຳເຂົ້າລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟແບບຖາວອນ**

ການນຳເຂົ້າລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ ແບບຖາວອນ ແມ່ນການນຳເຂົ້າເພື່ອ ຂຶ້ນ ທະບຽນ ແລະ ນຳໃຊ້ຖາວອນ ຢູ່ ສປປ ລາວ.

ລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ ທີ່ນຳເຂົ້າແບບຖາວອນ ໃນກໍລະນີເປັນລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ ໃໝ່ ຕ້ອງມີໃບຢັ້ງຢືນດ້ານຄຸນນະພາບ, ຄວາມປອດໄພ ແລະ ສິ່ງແວດລ້ອມ ຈາກ ໂຮງງານຜະລິດ, ສຳລັບ ລົດໄຟທີ່ນຳໃຊ້ແລ້ວ ຕ້ອງໄດ້ມີໃບຢັ້ງຢືນການກວດກາເຕັກນິກ ຈາກປະເທດຕົ້ນທາງ ຂອງປີທີ່ນຳເຂົ້າ ພາຍໃນເວລາ ສິບສອງເດືອນ ນັບແຕ່ວັນກວດກາເຕັກນິກ ແລະ ປະຕິບັດຕາມລະບຽບການ ສະເພາະ.

**ມາດຕາ 10 ການນຳເຂົ້າລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ ແບບຊົ່ວຄາວ**

ການນຳເຂົ້າລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ ແບບຊົ່ວຄາວ ແມ່ນການນຳເຂົ້າເພື່ອ ທ່ອງທ່ຽວ, ຢ້ຽມຢາມ, ວາງສະແດງ, ທົດລອງ, ທົດສອບ, ກູ້ໄພ, ຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ. ລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ ທີ່ນຳເຂົ້າແບບຊົ່ວຄາວ ຕ້ອງຮັບປະກັນມາດຕະຖານເຕັກນິກ, ຄວາມປອດໄພ ແລະ ສິ່ງແວດ ລ້ອມ ບົນພື້ນຖານການປະຕິບັດຕາມສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

ການນຳເຂົ້າລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ ເພື່ອນຳໃຊ້ເຂົ້າໃນໂຄງການກໍ່ສ້າງທີ່ເປັນ ບຸລິມະສິດຂອງລັດຖະບານ ລວມທັງເຂດເສດຖະກິດພິເສດ ໃນເວລານຳເຂົ້າ ຕ້ອງມີການຮັບຮອງແຜນນຳເຂົ້າ ຈາກຂະແໜງການທີ່ກ່ຽວຂ້ອງ.

ລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ ທີ່ໄດ້ນຳເຂົ້າແບບຊົ່ວຄາວ ພາຍຫຼັງສຳເລັດການປະຕິບັດ ໜ້າທີ່ວຽກງານແລ້ວ ໃຫ້ນຳລົດໄຟດັ່ງກ່າວອອກຄືນ, ຖ້າຫາກບໍ່ນຳອອກຄືນ ຈະຖືກປະຕິບັດມາດຕະການ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍພາສີ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 4
## ຮູບແບບການຂຶ້ນທະບຽນ ລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ

**ມາດຕາ 11 ຮູບແບບການຂຶ້ນທະບຽນລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ**

ການຂຶ້ນທະບຽນລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ ມີ ສອງ ຮູບແບບ ດັ່ງນີ້:

1. ການຂຶ້ນທະບຽນລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ ແບບຖາວອນ;
2. ການຂຶ້ນທະບຽນລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ ແບບຊົ່ວຄາວ.

**ມາດຕາ 12 ການຂຶ້ນທະບຽນລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ ແບບຖາວອນ**

ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງຂຶ້ນທະບຽນລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ ແບບຖາວອນ ຕ້ອງຍື່ນຄໍາຮ້ອງ ພ້ອມດ້ວຍເອກະສານຄົບຊຸດ ຕໍ່ກົມທາງລົດໄຟ ກະຊວງໂຍທາທິການ ແລະ ຂົນສົ່ງ ເພື່ອຂຶ້ນທະບຽນ ຊຶ່ງໃບທະບຽນ ມີອາຍຸການນໍາໃຊ້ ຫ້າປີ ແລະ ສາມາດຕໍ່ໄດ້.

**ມາດຕາ 13 ການຂຶ້ນທະບຽນລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ ແບບຊົ່ວຄາວ**

ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ມີຈຸດປະສົງນໍາລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ ເຂົ້າມານໍາໃຊ້ໃນໂຄງການທີ່ມີອາຍຸບໍ່ເກີນ ສອງປີ ຊຶ່ງໄດ້ຮັບອະນຸມັດຈາກລັດຖະບານ ຕ້ອງຂຶ້ນທະບຽນລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ ແບບຊົ່ວຄາວ ນໍາກົມທາງລົດໄຟ ກະຊວງໂຍທາທິການ ແລະ ຂົນສົ່ງ ຊຶ່ງມີອາຍຸການນໍາໃຊ້ທະບຽນ ສອງປີ ແລະ ສາມາດຕໍ່ໄດ້.

**ມາດຕາ 14 ການຂຶ້ນ ທະບຽນລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ ຄືນໃໝ່**

ການຂຶ້ນທະບຽນລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ ຄືນໃໝ່ ມີດັ່ງນີ້:

1. ໂອນກໍາມະສິດ;
2. ການປ່ຽນແປງຈຸດປະສົງຂອງການນໍາໃຊ້ ຫຼື ດັດແປງຮູບຮ່າງ ແລະ ເຕັກນິກຂອງລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ;
3. ໄດ້ຮັບການຊ່ວຍເຫຼືອຈາກຕ່າງປະເທດ.

**ມາດຕາ 15 ການລົບລ້າງທະບຽນລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ**

ທະບຽນລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ ຈະຖືກລົບລ້າງອອກຈາກບັນຊີ ໂດຍກົມທາງລົດໄຟ ໃນກໍລະນີ ດັ່ງນີ້:

1. ເປ່ເພ ທີ່ບໍ່ສາມາດນໍາໃຊ້ໄດ້;
2. ໃບທະບຽນໝົດອາຍຸໝົດອາຍຸການນໍາໃຊ້ ພາຍໃນເວລາ ຫົກເດືອນ;
3. ລົບລ້າງທະບຽນກ່ອນສົ່ງອອກ;
4. ສະເໜີຂໍລົບລ້າງທະບຽນລົດໄຟ;
5. ລະເມີດກົດໝາຍ ແລະ ລະບຽບການ.

ຖ້າຫາກມີຄວາມຕ້ອງການຂຶ້ນທະບຽນຄືນໃໝ່ ຕ້ອງເຮັດໜັງສືສະເໜີຫາກົມທາງລົດໄຟ ພິຈາລະນາ, ກວດກາຄວາມຖືກຕ້ອງຂອງເອກະສານ, ເສຍຄ່າປັບໃໝ ແລະ ຄ່າທໍານຽມອື່ນຕາມລະບຽບການ.

**ມາດຕາ 16 ການກວດກາເຕັກນິກລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ ກ່ອນການຂຶ້ນທະບຽນ**

ການກວດກາເຕັກນິກລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ ກ່ອນຂຶ້ນທະບຽນ ແມ່ນການກວດກາເບື້ອງຕົ້ນກ່ອນການນໍາໃຊ້ ຕ້ອງກວດກາຄວາມສົມບູນຂອງໂຄງສ້າງ ແລະ ວັດຖຸປະກອບທັງໝົດ ເພື່ອຮັບປະກັນຄຸນນະພາບ ແລະ ມາດຕະຖານເຕັກນິກ ຊຶ່ງລາຍການກວດກາຕົ້ນຕໍ ມີດັ່ງນີ້:

1. ຫົວຈັກກລົດໄຟ, ຕູ້ລົດໄຟ;
2. ລະບົບເກາະພ່ວງ;
3. ໂຄງສ້າງ, ຂະໜາດ ແລະ ນໍ້າໜັກ;
4. ລະບົບຂັບເຄື່ອນ, ແຮງລາກແກ່;
5. ລະບົບຫ້າມລໍ້, ຈໍານອນລໍ້;
6. ລະບົບບັນຊາ;
7. ລະບົບສື່ສານ;
8. ລະບົບໄຟ, ປັບອາກາດ;

9. ລະບົບນ້ຳ ແລະ ສຸຂາພິບານ;

10.ລະບົບຄວາມປອດໄພ.

## ໝວດທີ 5
## ທະບຽນ ລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ

**ມາດຕາ 17 ທະບຽນລົດໄຟ ແລະ ຕູ້ລົດໄຟ**

ທະບຽນລົດໄຟ ປະກອບດ້ວຍ ຕົວອັກສອນ ແລະ ຕົວເລກ ທີ່ໃຊ້ທັງພາສາລາວ ແລະ ພາສາອັງກິດ; ພາສາລາວແມ່ນນຳໃຊ້ຮູບແບບຕົວໜັງສື (Font) ເພັດສະຣາດໂອທີ (Phetsarath OT) ແລະ ພາສາອັງກິດ ແມ່ນນຳໃຊ້ຮູບແບບຕົວໜັງສື (Font) (Times New Roman) ດັ່ງນີ້:

1. ຕົວອັກສອນ ແມ່ນ ຊື່ຫຍໍ້ຂອງບໍລິສັດ ແລະ ປະເພດ ລົດໄຟ ແລະ ຕູ້ລົດໄຟ;
2. ຕົວເລກ ແມ່ນ ຊັ້ນຕູ້ລົດໄຟ ແລະ ທະບຽນລົດໄຟ.

ຕົວຢ່າງ:

ລລຟລ

ລຟທດ-01-0001

- ລລຟລ (ລັດວິສາຫະກິດ ລົດໄຟແຫ່ງຊາດລາວ) : ຊື່ບໍລິສັດ;
- ລຟທດ (ລົດໄຟທຳມະດາ);
- 01 : ຊັ້ນຕູ້ລົດໄຟ;
- 0001: ເລກທະບຽນຂອງຕູ້ລົດໄຟ.

ລລຟລ

ລຟດ-01-0001

- ລລຟລ (ລັດວິສາຫະກິດ ລົດໄຟແຫ່ງຊາດລາວ) : ຊື່ບໍລິສັດ;
- ລຟດ (ລົດໄຟດ່ວນ);
- 01 : ຊັ້ນຕູ້ລົດໄຟ;
- 0001: ເລກທະບຽນຂອງຕູ້ລົດໄຟ.

ລລຟລ

ລຟສ-01-0001

- ລລຟລ (ລັດວິສາຫະກິດ ລົດໄຟແຫ່ງຊາດລາວ) : ຊື່ບໍລິສັດ;
- ລຟສ (ລົດໄຟຄວາມໄວສູງ);
- 01 : ຊັ້ນຕູ້ລົດໄຟ;
- 0001: ເລກທະບຽນຂອງຕູ້ລົດໄຟ.

**ມາດຕາ 18 ທະບຽນຫົວຈັກລົດໄຟ**

ທະບຽນຫົວຈັກລົດໄຟ ປະກອບດ້ວຍ ຕົວອັກສອນ ແລະ ຕົວເລກ ດັ່ງນີ້:

1. ຕົວອັກສອນ ແມ່ນ ຊື່ຫຍໍ້ຂອງບໍລິສັດ ແລະ ປະເພດຫົວຈັກລົດໄຟ;
2. ຕົວເລກ ແມ່ນ ທະບຽນຫົວຈັກລົດໄຟ.

ຕົວຢ່າງ:

ລລຟລ

ຫຈຟ-01-001

- ລລຟລ (ລັດວິສາຫະກິດລົດໄຟແຫ່ງຊາດລາວ) : ຊື່ບໍລິສັດ;
- ຫຈຟ: ຫົວຈັກລົດໄຟ;

- 01 : ຫົວຈັກລົດໄຟໄຟຟ້າ (EMU, Electric Multiple Unit);
- 02 : ຫົວຈັກລົດໄຟກາຊວນ (DMU, Diesel Multiple Unit);
- 001: ເລກທະບຽນຫົວຈັກລົດໄຟ.

**ມາດຕາ 19 ທະບຽນຕູ້ລົດໄຟຂົນສົ່ງຜູ້ໂດຍສານ**

ທະບຽນຕູ້ລົດໄຟຂົນສົ່ງຜູ້ໂດຍສານ ປະກອບດ້ວຍ ຕົວອັກສອນ ແລະ ຕົວເລກ ດັ່ງນີ້:

1. ຕົວອັກສອນ ແມ່ນ ຊື່ຫຍໍ້ຂອງ ບໍລິສັດ ແລະ ຕູ້ລົດໄຟ;
2. ຕົວເລກ ແມ່ນ ປະເພດຕູ້ລົດໄຟ.

ຕົວຢ່າງ:

ລລຟລ

ດສ-01-0001

- ລລຟລ (ລັດວິສາຫະກິດ ລົດໄຟແຫ່ງຊາດລາວ) : ຊື່ບໍລິສັດ;
- ດສ (ຕູ້ຂົນສົ່ງຜູ້ໂດຍສານ);
- 01 : ຕູ້ຊັ້ນໜຶ່ງ;
- 02 : ຕູ້ທຸລະກິດ;
- 03 : ຕູ້ນັ່ງ;
- 04 : ຕູ້ຕຽງນອນ;
- 0001: ເລກທະບຽນຂອງຕູ້ລົດໄຟ.

**ມາດຕາ 20 ທະບຽນຕູ້ລົດໄຟຂົນສົ່ງສິນຄ້າ**

ທະບຽນຕູ້ລົດໄຟຂົນສົ່ງສິນຄ້າ ປະກອບດ້ວຍ ຕົວອັກສອນ ແລະ ຕົວເລກ ດັ່ງນີ້:

1. ຕົວອັກສອນ ແມ່ນ ຊື່ຫຍໍ້ຂອງ ບໍລິສັດ ແລະ ຕູ້ລົດໄຟ;
2. ຕົວເລກ ແມ່ນ ປະເພດຕູ້ລົດໄຟ.

ຕົວຢ່າງ:

ລລຟລ

ສຄ-01-0001

- ລລຟລ (ລັດວິສາຫະກິດ ລົດໄຟແຫ່ງຊາດລາວ) : ຊື່ບໍລິສັດ;
- ສຄ (ຕູ້ຂົນສົ່ງສິນຄ້າ);
- 01 : ຕູ້ຂົນສົ່ງສິນຄ້າທົ່ວໄປ;
- 02 : ຕູ້ຂົນສົ່ງສິນຄ້າເໜົ່າເປື່ອຍໄວ;
- 03 : ຕູ້ຂົນສົ່ງສິນຄ້າສິ່ງທີ່ເປັນອາຫານ ແລະ ພືດ;
- 04 : ຕູ້ຂົນສົ່ງສັດມີຊີວິດ;
- 05 : ຕູ້ຂົນສົ່ງສິນຄ້າອັນຕະລາຍ;
- 06 : ຕູ້ຂົນສົ່ງພິເສດ;
- 07 : ຕູ້ຂົນສົ່ງແຮ່ທາດ;
- 08 : ຕູ້ຂົນສົ່ງສຸກເສີນ;
- 09 : ຕູ້ຂົນສົ່ງຊາກສົບ;
- 0001: ເລກທະບຽນຂອງຕູ້ລົດໄຟ.

**ມາດຕາ 21 ທະບຽນທາງລາກລົດໄຟ**

ທະບຽນທາງລາກລົດໄຟ ປະກອບດ້ວຍ ຕົວອັກສອນ ແລະ ຕົວເລກ ດັ່ງນີ້:

1. ຕົວອັກສອນ ແມ່ນ ຊື່ຫຍໍ້ຂອງບໍລິສັດ ແລະ ປະເພດ ທາງລາກລົດໄຟ;
2. ຕົວເລກ ແມ່ນ ທະບຽນທາງລາກລົດໄຟ.

ຕົວຢ່າງ:

ລລຟລ-ທລ-01-001

- ລລຟລ (ລັດວິສາຫະກິດ ລົດໄຟແຫ່ງຊາດລາວ) : ຊື່ບໍລິສັດ;
- ທລ: ປະເພດທາງລາກລົດໄຟ;
- 01 : 02 ເພົາ 04 ລໍ້;
- 02 : 03 ເພົາ 06 ລໍ້;
- 03 : 04 ເພົາ 08 ລໍ້;
- 04 : ຫຼາຍກວ່າ 04 ເພົາ 08 ລໍ້;
- 001: ເລກທະບຽນທາງລາກລົດໄຟ;

**ມາດຕາ 22 ຕຳແໜ່ງການພິມ ສີ ຕົວອັກສອນ ແລະ ຕົວເລກທະບຽນ ລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ**

ການກຳນົດຕຳແໜ່ງການພິມ ສີ ຕົວອັກສອນ ແລະ ຕົວເລກທະບຽນ ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ ໃຫ້ປະຕິບັດ ດັ່ງນີ້:

1. ລົດໄຟ ແລະ ຕູ້ລົດໄຟ ໃຫ້ພິມ ຕົວອັກສອນ ແລະ ຕົວເລກ ໃສ່ດ້ານຂ້າງທັງສອງເບື້ອງ ໂດຍອີງຕາມລັກສະນະສະເພາະຂອງຕູ້ ໃນຕຳແໜ່ງທີ່ເໝາະສົມ ຫຼື ຢູ່ໃກ້ກັບປະຕູທາງ ຂຶ້ນ-ລົງ;
2. ຫົວຈັກລົດໄຟ ໃຫ້ພິມ ຕົວອັກສອນ ແລະ ຕົວເລກ ໃສ່ດ້ານໜ້າ ແລະ ດ້ານຂ້າງທັງສອງເບື້ອງ;
3. ທາງລາກລົດໄຟ ໃຫ້ພິມຕົວອັກສອນ ແລະ ຕົວເລກ ໃສ່ດ້ານຂ້າງທັງສອງເບືອງ ໃນຕຳແໜ່ງທີ່ເໝາະສົມ;
4. ການກຳນົດສີ ຕົວອັກສອນ ແລະ ຕົວເລກ ແມ່ນ ນຳໃຊ້ສີທີ່ຕັດກັບສີພື້ນຂອງລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ.

ເມື່ອໄດ້ຮັບໃບທະບຽນແລ້ວ, ເຈົ້າຂອງ ຫຼື ຕົວແທນ ລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ ຕ້ອງພິມຕົວອັກສອນ ແລະ ເລກທະບຽນໃສ່ລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ ຕາມລະບຽບການຂອງກົມທາງລົດໄຟກຳນົດ.

## ໝວດທີ 6
## ຄ່າທຳນຽມ ແລະ ຄ່າບໍລິການ

**ມາດຕາ 23 ຄ່າທຳນຽມ ແລະ ຄ່າບໍລິການ**

ຄ່າທຳນຽມ ແລະ ຄ່າບໍລິການ ການຂຶ້ນທະບຽນລົດໄຟ, ລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ ມີດັ່ງນີ້:

1. ໃບອະນຸຍາດທາງດ້ານເຕັກນິກກ່ອນການນຳເຂົ້າລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ;
2. ໃບອະນຸຍາດການຂຶ້ນທະບຽນລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ;
3. ໃບອະນຸຍາດການແລ່ນລົດໄຟ;
4. ໃບອະນຸຍາດນຳໃຊ້ ລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ;
5. ໃບຢັ້ງຢືນກວດກາເຕັກນິກລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ ຕາມຮອບວຽນ.

**ມາດຕາ 24 ການເກັບຄ່າທຳນຽມ ແລະ ຄ່າບໍລິການ**

ການເກັບຄ່າທຳນຽມ ແລະ ຄ່າບໍລິການ ການຂຶ້ນທະບຽນລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ ແມ່ນໃຫ້ປະຕິບັດຕາມ ລັດຖະບັນຍັດຂອງປະທານປະເທດ ທີ່ໄດ້ກຳນົດໄວ້ໃນແຕ່ລະໄລຍະ.

## ໝວດທີ 7
## ຂໍ້ຫ້າມ

**ມາດຕາ 25 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ປອມແປງ, ປິດບັງ, ປ່ຽນ, ສັບປ່ຽນ ຕົວອັກສອນ ແລະ ຕົວເລກ ທະບຽນລົດໄຟ, ຫົວຈັກ, ຕູ້ ແລະ ຫາງລາກ ລົດໄຟ;
2. ແຈ້ງ ຫຼື ລາຍງານຂໍ້ມູນເທັດ ກ່ຽວກັບລົດໄຟ, ຫົວຈັກ, ຕູ້ ແລະ ຫາງລາກ ລົດໄຟ;
3. ຕໍ່ເຕີມ ແລະ ດັດແປງເຕັກນິກລົດໄຟ, ຫົວຈັກ, ຕູ້ ແລະ ຫາງລາກ ລົດໄຟໂດຍບໍ່ໄດ້ຮັບອະນຸຍາດ;
4. ເປັນສື່ກາງໃນການໃຫ້ ແລະ ຮັບສິນບົນ;
5. ຂັດຂວາງ, ບໍ່ອຳນວຍຄວາມສະດວກ, ບໍ່ໃຫ້ການຮ່ວມມືໃນການກວດກາຂອງເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງຂອງລັດ;
6. ນຳໃຊ້ລົດໄຟ ທີ່ບໍ່ໄດ້ຂຶ້ນທະບຽນ ແລະ ຕົວອັກສອນ ແລະ ຕົວເລກ ທະບຽນທີ່ບໍ່ຖືກຕ້ອງຕາມ ກົດໝາຍ ແລະ ລະບຽບການ;
7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ກົດໝາຍ.

**ມາດຕາ 26 ຂໍ້ຫ້າມສຳລັບເຈົ້າຂອງ ຫຼື ຕົວແທນ ລົດໄຟ, ຫົວຈັກ, ຕູ້ ແລະ ຫາງລາກ ລົດໄຟ**

ຫ້າມ ເຈົ້າຂອງ ຫຼື ຕົວແທນ ລົດໄຟ, ຫົວຈັກ, ຕູ້ ແລະ ຫາງລາກ ລົດໄຟ ມີພຶດຕິກຳ ດັ່ງນີ້:

1. ປອມແປງ, ປິດບັງ, ປ່ຽນ, ສັບປ່ຽນ ຕົວອັກສອນ ແລະ ຕົວເລກ ທະບຽນລົດໄຟ, ຫົວຈັກ, ຕູ້ ແລະ ຫາງລາກ ລົດໄຟ;
2. ຕໍ່ເຕີມ ແລະ ດັດແປງເຕັກນິກລົດໄຟ, ຫົວຈັກ, ຕູ້ ແລະ ຫາງລາກ ລົດໄຟ ໂດຍບໍ່ໄດ້ຮັບ ອະນຸຍາດ;
3. ສົມຮູ້ຮ່ວມຄິດ,ໃຫ້ສິນບົນແກ່ເຈົ້າໜ້າທີ່ ແລະ ພະນັກງານຂອງລັດ ໃນການຂຶ້ນທະບຽນລົດໄຟ, ຫົວຈັກ, ຕູ້ ແລະ ຫາງລາກ ລົດໄຟ;
4. ຂັດຂວາງ, ບໍ່ອຳນວຍຄວາມສະດວກ, ບໍ່ໃຫ້ການຮ່ວມມືໃນການກວດກາຂອງເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງຂອງລັດ;
5. ນຳໃຊ້ລົດໄຟ ທີ່ບໍ່ໄດ້ຂຶ້ນທະບຽນ ແລະ ພິມຕົວອັກສອນ ແລະ ຕົວເລກ ທະບຽນທີ່ບໍ່ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ;
6. ລາຍງານຂໍ້ມູນກ່ຽວກັບການການຂຶ້ນທະບຽນດັ່ງກ່າວບໍ່ຖືກຕ້ອງ;
7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 27 ຂໍ້ຫ້າມສຳລັບເຈົ້າໜ້າທີ່ ແລະ ພະນັກງານ ທີ່ກ່ຽວຂ້ອງຂອງລັດ**

1. ລະເມີດລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການ;
2. ປະລະໜ້າທີ່, ເມີນເສີຍ, ບໍ່ປະຕິບັດຕາມມະຕິ ຫຼື ຄຳສັ່ງຂອງຂັ້ນເທິງ;
3. ຮັບສິນບົນ, ສວຍໃຊ້ສິດອຳນາດ, ໜ້າທີ່ຕຳແໜ່ງ ເພື່ອຊອກຫາຜົນປະໂຫຍດສ່ວນຕົວ ແລະ ໝູ່ຄະນະ;
4. ໃຊ້ສິດ, ໜ້າທີ່ຕຳແໜ່ງ ເກີນຂອບເຂດຄວາມຮັບຜິດຊອບຂອງຕົນ;
5. ໃຊ້ກິລິຍາ, ມາລະຍາດ ທີ່ບໍ່ເໝາະສົມ ໃນການປະຕິບັດໜ້າທີ່;
6. ອອກທະບຽນລົດໄຟ, ຫົວຈັກ, ຕູ້ ແລະ ຫາງລາກ ລົດໄຟ ທີ່ບໍ່ຖືກຕ້ອງຕາມປະເພດ;
7. ເປີດເຜີຍ, ສົມຮູ້ຮ່ວມຄິດ, ປອມແປງເອກະສານ ແລະ ຂໍ້ມູນ ກ່ຽວກັບວຽກງານການອອກ ທະບຽນລົດໄຟ, ຫົວຈັກ, ຕູ້ ແລະ ຫາງລາກ ລົດໄຟ;

8. ປິດບັງ ແລະ ບິດເບືອນ ຂໍ້ມູນ ກ່ຽວກັບວຽກງານການອອກທະບຽນລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ ຕໍ່ຂັ້ນເທິງ;

9. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 8
## ການຄຸ້ມຄອງ ແລະ ການກວດກາ ວຽກງານການຂຶ້ນທະບຽນ ລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ

**ມາດຕາ 28 ອົງການຄຸ້ມຄອງ ແລະ ກວດກາວຽກງານການຂຶ້ນທະບຽນລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ**

ກົມທາງລົດໄຟ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອ ຄຸ້ມຄອງ, ຕິດຕາມ ກວດກາ ວຽກງານການຂຶ້ນທະບຽນ ລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ ຕາມສິດ ແລະ ໜ້າທີ່ ຂອງຕົນ ຢ່າງ ເຂັ້ມງວດ.

**ມາດຕາ 29 ສິດ ແລະ ໜ້າທີ່ຂອງກົມທາງລົດໄຟ**

ກົມທາງລົດໄຟ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້ານິຕິກຳ ກ່ຽວກັບການຂຶ້ນທະບຽນລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ;

2. ຄຸ້ມຄອງການຂຶ້ນທະບຽນ ລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ;

3. ອອກ, ໂຈະ ຫຼື ຖອນ ໃບທະບຽນລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ;

4. ກຳນົດມາດຕະຖານເຕັກນິກ ແລະ ເລືອກເຟັ້ນເຕັກໂນໂລຊີ ທີ່ເໝາະສົມໃນການຂຶ້ນທະບຽນ ລົດລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ;

5. ພົວພັນ, ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບການຂຶ້ນທະບຽນ ລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ;

6. ສະຫຼຸບ, ສັງລວມຂໍ້ມູນສະຖິຕິ ການຂຶ້ນທະບຽນລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟແລ້ວ ລາຍງານໃຫ້ ກະຊວງໂຍທາທິການ ແລະ ຂົນສົ່ງ ຢ່າງເປັນປົກກະຕິ;

7. ກຳນົດແບບພິມ ການຂຶ້ນທະບຽນລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ;

8. ອອກໃບອະນຸຍາດທາງດ້ານເຕັກນິກກ່ອນການນຳເຂົ້າ, ການຂຶ້ນທະບຽນ, ການແລ່ນລົດໄຟ, ນຳໃຊ້ ແລະ ຢັ້ງຢືນການກວດກາເຕັກນິກຕາມຮອບວຽນ ຂອງລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 30 ເນື້ອໃນການກວດກາ**

ການກວດກາວຽກງານການຂຶ້ນທະບຽນ ລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ກວດກາການປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານການຂຶ້ນທະບຽນລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ;

2. ກວດກາ ປະສິດຕິພາບການບໍລິການຂຶ້ນທະບຽນລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ, ມາດຕະຖານເຕັກນິກ ຂອງລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ ດ້ານຄຸນນະພາບ, ຄວາມປອດໄພ ແລະ ສິ່ງແວດລ້ອມ;

3. ກວດກາການປະຕິບັດສິດ, ໜ້າທີ່, ນະໂຍບາຍ ແລະ ມາດຕະການ ຕໍ່ພະນັກງານທີ່ກ່ຽວຂ້ອງຂອງລັດ.

**ມາດຕາ 31 ຮູບການກວດກາ**

ການກວດກາວຽກງານການຂຶ້ນທະບຽນລົດໄຟ, ຫົວຈັກ, ຕູ້ ແລະ ທາງລາກ ລົດໄຟ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຢ່າງເປັນປົກກະຕິ ຊຶ່ງແມ່ນການກວດກາ ທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີການກຳນົດເວລາອັນແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນການເມື່ອເຫັນວ່າມີຄວາມຈໍາເປັນ ຊຶ່ງແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາໂດຍຮີບດ່ວນ, ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

ໃນການດໍາເນີນການກວດກາ ໃຫ້ປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 32 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມທາງລົດໄຟ ເປັນເຈົ້າການໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ.

ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ, ຕ່າງປະເທດ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ.

**ມາດຕາ 33 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ.

ລັດຖະມົນຕີ

ວຽງສະຫວັດ ສີພັນດອນ